# ການຂໍເງິນອັດຕາ MEDI-CAL ເພື່ອໃຊ້ຈ່າຍໃນການດູແລເຮືອນ (Home Upkeep Allowance) ສໍາລັບບຸກຄົນທີ່ກໍາລັງອາໃສຢູ່ ເຮືອນພັກສໍາລັບຜູ້ເຖົ້າ ຫລື ສະຖານຊ່ວຍເຫລືອທາງການແພດອື່ນ ຊົ່ວຄາວ

ຖ້າວ່າທ່ານກໍາລັງຢູ່ໃນແຜນ Medi-Cal ແລະ ທ່ານກໍາລັງອາໃສຢູ່ ຫລືວ່າ ຈະໄປອາໃສຢູ່ໃນເຮືອນພັກສໍາລັບຜູ້ເຖົ້າ ຫລື ສະຖານຊ່ວຍເຫລືອທາງການແພດອື່ນໆ ທ່ານອາດສາມາດມີສິດຂໍຫລຸດຄ່າ Medi-Cal ຊຶ່ງມີຊື່ວ່າ Home Upkeep Allowance. Home Upkeep Allowance ຈະເຮັດໃຫ້ທ່ານສາມາດຕັດເອົາເງິນ $209 ຕໍ່ເດືອນອອກຈາກລາຍໄດ້ຂອງທ່ານ ເພື່ອໄວ້ໃຊ້ໃນການດູແລ ແລະ ຮັກສາເຮືອນຂອງທ່ານ ໃນໄລຍະທີ່ທ່ານກໍາລັງໄປອາໃສຢູ່ໃນເຮືອນພັກສໍາລັບຜູ້ເຖົ້າ ຫລື ສະຖານຊ່ວຍເຫລືອທາງການແພດອື່ນໆ ຊົ່ວຄາວ. ທ່ານສາມາດໄດ້ຮັບເງິນ Home Upkeep Allowance ເປັນເວລາຕິດຕໍ່ກັນໄປໄດ້ຫລາຍເຖິງ 6 ເດືອນ ນັບຕັ້ງແຕ່ວັນທີທີ່ທ່ານໄດ້ເຂົ້າໄປອາໃສຢູ່ໃນ ເຮືອນພັກສໍາລັບຜູ້ເຖົ້າ.

ເພື່ອຈະໃຫ້ມີສິດເໝາະສົມໃນການຂໍເອົາ Home Upkeep Allowance:

- ທ່ານຕ້ອງມີຈຸດປະສົງທີ່ຈະຍ້າຍອອກຈາກເຮືອນພັກສໍາລັບຜູ້ເຖົ້າ ແລະ ກັບໄປເຮືອນຂອງຕົນພາຍໃນ 6 ເດືອນ ນັບຕັ້ງແຕ່ວັນທີທີ່ທ່ານໄດ້ເຂົ້າໄປອາໃສຢູ່ໃນເຮືອນພັກສໍາລັບຜູ້ເຖົ້າ.
- ທ່ານຕ້ອງມີຄໍາຢືນຢັນທາງການແພດອອກໃຫ້ໂດຍທ່ານໝໍຂອງທ່ານ ທີ່ຢັ້ງຢືນວ່າ ທ່ານຈະສາມາດຍ້າຍກັບຄືນໄປຢູ່ເຮືອນໄດ້ພາຍໃນ 6 ເດືອນ.
- ບໍ່ມີຜົວ ຫລື ເມັຽ ຫລື ຄົນໃນຄອບຄົວຂອງທ່ານອາໃສຢູ່ໃນເຮືອນຂອງທ່ານ.
- ມີຄົນມາດູແລເຮືອນຂອງທ່ານ ຈົນກວ່າທ່ານຈະຍ້າຍກັບຄືນເຂົ້າມາຢູ່ເຮືອນ.

ຖ້າທ່ານຢາກໄດ້ຂໍ້ມູນເພີ່ມເຕີມກ່ຽວກັບ Home Upkeep Allowance ຫລື ຢາກຈະຂໍເງິນນີ້ ກະລຸນາຕິດຕໍ່ຫ້ອງການບໍລິການສັງຄົມຢູ່ຄ່າວຕີ້ ຂອງທ່ານ.